# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 22 ເມສາ 2007 (4-22-2007)

## ຄວາມຮັກທີ່ເຊື່ອຟັງ

**ຂໍ້ພຣະຄັມພີໃນບົດຮຽນ:** ໂຢຮັນ 13:34-35, 14:15,21-24,15:9-16

**ຄຳຖາມແຫ່ງຊີວິດ:** ເປັນຫຍັງຮັກພຣະເຢຊູກໍຍັງບໍ່ພຽງພໍ?

**ພຣະຄັມພີແຫ່ງຄວາມຈິງ:** ຜູ້ທີ່ຮັກພຣະເຢຊູເຮັດໃນສິ່ງພຣະອົງບອກໃຫ້ເຂົາເຮັດ ແລະເກີດຜົນທີ່ຄົງຢູ່ຕລອດໄປ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອທ່ານຈະຊ່ອຍທ່ານໃຫ້ຄົ້ນພົບສິ່ງທີ່ພຣະເຢຊູຕ້ອງການຈາກພວກເຮົາໂດຍ:

- ໃຫ້ເຂົ້າໃຈວ່າການທີ່ສະແດງຄວາມຮັກ ແລະເຊື່ອຟັງພຣະເຢຊູເປັນສິ່ງໄປນຳກັນ ຂາດກັນບໍ່ໄດ້.
- ໃຫ້ຕັດສິນໃຈວ່າການທີ່ສະແດງຄວາມຮັກ ແລະເຊື່ອຟັງຄຳສັ່ງຂອງພຣະເຢຊູ ແລະເກີດຜົນທີ່ຄົງຢູ່ຕລອດໄປ.

ມັນເປັນການຍາກບໍ່ທີ່ຈະຮັກພຣະເຢຊູ? ພຣະເຢຊູເປັນຜູ້ຍາກທີ່ຈະຮັກບໍ? ຄຳຖາມເຫລົ່ານີ້ອາດຈະທ້າຖາຍຕໍ່ຫລາຍໆຄົນໃນບ່ອນຕ່າງໆ. ອັນໃດເປັນສິ່ງ**ບໍ່ໜ້າຮັກ**ໃນພຣະເຢຊູ. ພຣະເຢຊູເປັນ**ຜູ້ຮັກຍາກ** ໄດ້ກໍຕໍ່ເມື່ອມີຄວາມຮັກຕໍ່ພຣະອົງນັ້ນເປັນພຽງຄວາມຮູ້ສຶກ. ການທີ່ຈະຮັກອົງພຣະເຢຊູຢ່າງແທ້ຈິ່ງນັ້ນປະກອບດ້ວຍຄວາມຮູ້ສຶກພາຍໃນຈິດໃຈ ແລະມີການປະຕິບັດສະແດງອອກມາທາງນອກ. ຄວາມຮັກທີ່ບໍ່ມີການເຊື່ອຟັງເປັນພຽງການອະນຸຍາດໃຫ້ເຮັດນັ້ນເຮັດນີ້ ແຕ່ບໍ່ມີການປະຕິດບັດຍັງເລີຍ. ການເຊື່ອຟັງແຕ່ບໍ່ມີຄວາມຮັກກໍພຽງແຕ່ເປັນກົດເກນເທົ່ານັ້ນ ຄືຮັກສາກົດເກນໄວ້ໃນນາມກົດເກນເທົ່ານັ້ນ, ແຕ່ບໍ່ແມ່ນມີຄວາມສຳພັນ. ບົດຮຽນນີ້ໄດ້ສອນວ່າ ຄວາມຮັກແລະການເຊື່ອຟັງເປັນສິ່ງທີ່ແຍກຈາກກັນບໍ່ໄດ້ເລີຍ.

## ສຶກສາພຣະຄັມພີ

### 1. ຈົ່ງຮັກຊຶ່ງກັນແລະກັນ (ໂຢຮັນ 13:34-35)

ການເປັນຊາດຢິວ ພວກເຂົາເຂົ້າໃຈເຖິງກົດບັນຍັດດີ. ຄວາມສຳພັນລະຫວ່າງພຣະເຈົ້າແລະຄົນຊາດຢິວຂຶ້ນກັບຄວາມສັດຊື່ຂອງພຣະເຈົ້າ ແລະການເຊື່ອຟັງຂອງມະນຸດ. ດັ່ງນັ້ນ, ໃນເມື່ອອົງພຣະເຢຊູໄດ້ມອບໃຫ້ພວກເຂົາ **ບັນຍັດໃໝ່ຄື: ໃຫ້ຮັກຊຶ່ງກັນແລະກັນ.** ນັ້ນບໍ່ໄດ້ເປັນສິ່ງພິເສດຫຍັງເລີຍເພາະ ພວກເຂົາໄດ້ຮັບຄຳສັ່ງສອນອັນສັກສິດຢ່າງນີ້ຕລອດມາ. ແນວໃດກໍຕາມ ຄຳສັ່ງສະເພາະເຈາະຈົງນີ້ເປັນ**ຄຳສັ່ງ**ໃໝ່. ໃນພາສາກຣີກ ໄດ້ແປວ່າ ໃໝ່ ບໍ່ແມ່ນໃໝ່ໃນນາມເວລາ ແຕ່ແມ່ນໃນຄຸນນະພາບ.

ຕາມຄຳສັງຂອງພຣະຄັມພີເດີມແລ້ວ ຕ້ອງໃຫ້ຮັກເພື່ອນບ້ານເໝືອນຮັກຕົວເອງ (ລະບຽບພວກລີວີ 19:18). ແຕ່ຄຳສັ່ງ ຫລືບັນຍັດຂອງພຣະເຢຊູແຕກຕ່າງຢູ່ສອງປະເດນ. **ນຶ່ງ**, ມັນກວ້າງໄກໄປກວ່າຄວາມຮັກຕໍ່ເພື່ອນບ້ານໃກ້ຄຽງ, ພຣະຄຣິດໃຫ້ພວກເຮົາຮັກມະນຸດຊາດ, ບໍ່ຮັກແຕ່ຄົນຕົນເອງ ຄືຜູ້ມີຜິວໜັງເໝືອນກັນເທົ່ານັ້ນ. **ສອງ**, ຄຳສັ່ງນັ້ນໃຫ້ມີຄວາມຮັກບໍ່ພຽງແຕ່ຕົວເອງ. ຜູ້ຕິດຕາມພຣະເຢຊູໄດ້ຖືກທ້າທາຍໃຫ້ມີຄວາມຮັກ, ບໍ່ໃຫ້ຮັກແຕ່ຕົນເອງ. ພຣະເຢຊູສັ່ງໃຫ້ຮັກເໝືອນພຣະອົງຊົງຮັກ, ຈົນພຣະອົງຍອມລ້າງຕີນຂອງພວກສາວົກ, ໃຫ້ພວກເຂົາແລະພວກເຮົາເອົາເປັນຕົວຢ່າງ.

ພວກທີ່ຕິດຕາມພຣະເຢຊູຕ້ອງມີຄວາມຮັກ ບໍ່ແມ່ນສິ່ງອື່ນໃດ. ບາງຄົນຜູ້ມັກໝາມັກເວົ້າສເມີວ່າ, "ຂ້ອຍຮັກໝາຂອງຂ້ອຍ." ການທີ່ມີຄວາມຮັກບໍ່ແມ່ນຮັກແຕ່ຄົນນັ້ນເທົ່ານັ້ນ ແຕ່ຕ້ອງຮັກສິ່ງທີ່ເຂົາຮັກເໝືອນກັນ. ພຣະລັກສະນະຂອງພຣະເຈົ້າຄື: "ຮັກຄົນຂອງພຣະອົງ." ການມີຄວາມຮັກຕໍ່ກັນແລະກັນນັ້ນເປັນພິນງານ ທີ່ຈະໃຫ້ **ທຸກໆຄົນຮູ້ວ່າພວກທ່ານໄດ້ເປັນສາວົກຂອງເຮົາແທ້.**

ໃນຊາດນຶ່ງຊາດໃດ ຫລືເຜົ່າໃດກໍຕາມ ມີຄວາມຮັກເປັນສິ່ງບອກຄົນອື່ນໃຫ້ຮູ້ເຖິງການເປັນສາວົກຂອງອົງພຣະເຢຊູແທ້. ຄວາມຮັກນີ້ໄດ້ເຮັດໃຫ້ຄົນທີ່ບໍ່ເຊື່ອ, ຫລືຄົນຕາບອດຕໍ່ຂ່າວປະເສີດແລະພຣະຄັມພີໄດ້ຮູ້ວ່າພວກຄຣິສຕຽນໄດ້ມີຄວາມຮັກແທ້ຕໍ່ກັນແລະກັນ. ພວກຄົນເຫລົ່ານີ້ໄດ້ຮູ້ວ່າພວກເຂົາເປັນຄຣິສຕຽນອັນແທ້ຈິງເພາະພວກເຂົາໄດ້ຮັກກັນແລະກັນດ້ວຍໃຈຈິງ.

ພຣະເຢຊູໄດ້ທ້າທາຍພວກສາວົກ ແລະໄດ້ບອກວິທີງ່າຍໆເພື່ອໃຫ້ຄົນອື່ນຮູ້ຈັກການເປັນສາວົກເຂົາໂດຍຊົງກ່າວວ່າ, (ຮັກກັນແລະກັນ) ຜູ້ອື່ນຈະຮູ້ຈັກວ່າ ພວກເຂົາໄດ້ເປັນສາວົກຂອງພຣະເຢຊູແທ້. ຕາມປົກກະຕິ ພວກສາສນາຢິວໃນສມັຍຂອງພຣະເຢຊູ ພວກເຂົາມັກອະທິບາຍພຣະດຳຣັດຫລືຄຳສັ່ງໃຫ້ຍືດຍາວ ບໍ່ແມ່ນເຮັດໃຫ້ງ່າຍຫລືສັ້ນເຂົ້າ. ພວກເຂົາໄດ້ສ້າງລະບົບສາສນາຈົນມີ 613 ກົດບັນຍັດ, ທີ່ຂຶ້ນກັບຕົວອັນສອນຂອງພາສາເຮັບເຣີໃນພຣະບັດຍັດ 10 ປະການ . 248 ກົດບັນຍັດ ມີລັກສະນະເຊັ່ນດຽວກັບກັບພາກສ່ວນຮ່າງກາຍຂອງມະນຸດເຮົາຊຶ່ງພວກເຮົາຄວນເອົາມາປະຕິບັດ. 365 ກົດບັນຍັດ-ໝາຍເຖິງຈຳນວນຂອງວັນໃນປີນຶ່ງ-ຊຶ່ງເປັນທາງລົບຕາມທັມະຊາດ, ເປັນສິ່ງບອກບໍ່ໃຫ້ເຮັດ. ການຈະເປັນສາສນາອັນຖືກຕ້ອງໃນສມັຍຂອງພຣະເຢຊູ ພວກເຂົາໄດ້ໂຕ້ຖຽງກັນຢ່າງຍາວນານວ່າອັນໃດຄວນໃຊ້ ແລະບໍ່ຄວນໃຊ້ໃນຫລັກຄວາມເຊື່ອໃນສາສນານັ້ນ.

ອົງພຣະເຢຊູໄດ້ເຮັດສິ່ງທີ່ເຂົາໂຕ້ຖຽງກັນໃນສມັຍຂອງພຣະອົງນັ້ນງ່າຍຂຶ້ນສຳລັບພວກເຮົາ. ພຣະອົງໄດ້ເຮັດໃຫ້ເຂົ້າໃຈງ່າຍຂຶ້ນທີ່ຈະເປັນສາວົກຂອງພຣະອົງແທ້. ການຕິດຕາມອົງພຣະເຢຊູໄປນັ້ນບໍ່ເປັນການງ່າຍເລີຍ. ການທີ່ຈະເຂົ້າໃຈວ່າເຮັດຢ່າງໃດຈຶ່ງຕາມອົງພຣະເຢຊູໄປໄດ້ນັ້ນຕ້ອງເຮັດຫຍັງແດ່. ພຣະເຢຊູສອນໃຫ້ເຮັດນັ້ນຄືຢ່າງງ່າຍໆ - ໃຫ້ຮັກຊຶ່ງກັນແລະກັນ.

## 2. <u>ຮັກສາພຣະບັນຍັດ</u> (ໂຢຮັນ 14:15,21-24)

ການທີ່ຈະເຂົ້າໃຈເຖິງນິສັຍໃຈຄໍຂອງມະນຸດນັ້ນເປັນການຍາກຫລາຍ. ຫລາຍເທື່ອຄົນເຮົາເຮັດອັນດຽວກັນໂດຍໃຊ້ວິທີຫລາຍໆແບບແຕກຕ່າງກັນ. ມີບາງຄົນເຮັດສວນເພາະເຂົາມັກຂີ້ດິນ ເພາະມັນໄດ້ເຕືອນເຂົາເວລາເປັນເດັກນ້ອຍຢູ່ກັບພໍ່ແມ່ໃນທົ່ງນາ.

ບາງຄົນມີຊີວິດຄຣິສຕຽນແລະຊອກຫາພຣະເຢຊູໂດຍເຫດຜົນແຕກຕ່າງກັນ. ຜູ້ເຮັດຢ່າງນີ້ເພາະພໍ່ແມ່ພາເຮັດ ແຕ່ຄົນອື່ນອະທິບາຍວ່າ, "ມັນຮູ້ສຶກຄັກດີ?" ການທີ່ໄດ້ຮັບການຍົກຍ້ອງອາດເປັນສິ່ງໜູນໃຈໃຫ້ເຮັດແບບນັ້ນ. ແຕ່ການເຊື່ອຟັງທີ່ແທ້ຈິງມີຜູ້ດຽວທີ່ເຮົາຄວນເຮັດເພື່ອ: ໃຫ້ພຣະຄຣິດຊອບພຣະທັຍ. ຄຳສັ່ງຂອງພຣະອົງຄືໃຫ້ເຊື່ອຟັງ. ພວກເຮົາຮູ້ຈັກສິ່ງນີ້ຈາກການອ່ານພຣະຄຳຂອງພຣະອົງທີ່ເວົ້າຕໍ່ພວກສາວົກ 12 ຄົນ. ຖ້າທ່ານຮັກເຮົາ, **ທ່ານຈະຮັກສາຄຳສັ່ງຂອງເຮົາ.** ຢ່າເປັນຄົນສົງສັຍໃນຄຳສັ່ງທີ່ວ່າ, **ຜູ້ທີ່ມີພຣະບັນຍັດຂອງເຮົາ ແລະເຮັດຕາມກໍເປັນຜູ້ທີ່ຮັກເຮົາ.** ແມ່ນໃຜເປັນຜູ້ມີພຣະບັນຍັດຂອງພຣະເຢຊູ? ເຫັນວ່າເກືອບທຸກຄົນໃນທະວີບອະເມຣິກາໄດ້ຍິນເຣື່ອງຂອງພຣະເຢຊູ. ຄຣິສຕະຈັກຫລາຍບ່ອນໄດ້ໃຊ້ຄຳສອນຂອງພຣະເຢຊູແຜ່ອອກໄປຢ່າງກວ້າງໄກ. ຢ່າງໃດກໍຕາມ, ການທີ່ເສັງຜ່ານບໍ່ແມ່ນພຽງແຕ່ມີພຣະບັນຍັດໄວ້ ແຕ່ຕ້ອງເຊື່ອຟັງໃຫ້ເຮັດຕາມ. ການຟັງພຣະບັນຍັດເທົ່ານັ້ນ ບໍ່ໄດ້ສະແດງວ່າເຮົາໄດ້ຮັກພຣະອົງ ແລະເຮົາຕ້ອງເອົາມາໃຊ້ໃນຊີວິດກັບສິ່ງທີ່ພຣະອົງບອກສອນ.

ພຣະເຢຊູສັນຍາວ່າພຣະອົງຈະ**ເປີດເຜີຍ**ຕົນເອງຕໍ່ພວກສາວົກ. ພາສາກຣີກແປຄຳທີ່ວ່າ ເປີດເຜີຍ ໝາຍເຖິງສິ່ງທີ່ເຄີຍບັງໄວ້. ຜູ້ທີ່ເຊື່ອຟັງພຣະຄຣິດຈະໄດ້ພົບກັບພຣະອົງໃນສະພາບພິເສດ. ການທີ່ປະສົບກັບການສະຖິດຂອງພຣະເຢຊູຂຶ້ນກັບການເຊື່ອຟັງພຣະອົງ, ບໍ່ແມ່ນການຢູ່ໃກ້ແຕ່ຮ່າງກາຍເທົ່ານັ້ນ. ໃຫ້ຄິດຢ່າງນີ້: ຢາກຮູ້ຈັກພຣະອົງ ໃຫ້ຮັກພຣະອົງ, ທີ່ຈະຮັກພຣະອົງຄືໃຫ້ເຊື່ອຟັງພຣະອົງ, ທີ່ຈະເຊື່ອຟັງຄືການປະສົບກັບການສະຖິດຢູ່ນຳຂອງພຣະອົງໃນຊີ

ວິດທ່ານ. ອົງພຣະຄຣິດແລະພຣະບິດາໄດ້ສ້າງ**ບ້ານເຮືອນ**(**ພຣະວິຫານ**)ຂອງພຣະອົງຢູ່ກັບຜູ້ທີ່ເຊື່ອຟັງ.

**3. <u>ເກີດຜົນທີ່ຄົງຢູ່ຕລອດໄປ</u>** (ໂຢຮັນ 15:9-16)

ທີ່ຈະເອົາພຣະບັນຍັດມອບໃຫ້ພວກສາວົກເພື່ອຈະບໍ່ໃຫ້ເປັນພາຣະໃຫຍ່ຕໍ່ພວກເຂົາ, ອົງພຣະເຢຊູໄດ້ບອກພວກສາວົກວ່າ ພຣະອົງ**ຮັກ**ເຂົາເໝືອດັ່ງອົງ**ພຣະບິດາ**ໄດ້ຮັກພຣະອົງ. ການເຊື່ອຟັງຈະໄດ້ຜົນດີໃນເມື່ອຜູ້ບອກໃຫ້ເຊື່ອນັ້ນມີຈຸດປະສົງດີ. ສິ່ງນີ້ຈະຊ່ອຍຜູ້ເຊື່ອຟັງ**ຮັກສາ**ຄຳສັ່ງສອນ ແລະ**ຕັ້ງໝັ້ນ**ໃນຄວາມຮັກຂອງພຣະອົງ. ນີ້ບໍ່ໄດ້ໝາຍຄວາມວ່າຄວາມຮັກຂອງພຣະເຈົ້າຂຶ້ນກັບການເຊື່ອຟັງຂອງພວກເຮົາ. ການທີ່ຈະມີຊີວິດຢູ່ໃນຄວາມຮັກຂອງພຣະຄຣິດ ຄືໃຫ້ຮູ້ເຖິງຄວາມຮັກນັ້ນ.

ເປົ້າໝາຍຄຳສອນຂອງອົງພຣະເຢຊູຄື ຄວາມຍິນດີ, ຄວາມຍິນດີທີ່ຄົບບໍຣິບູນ. ເຮັດໃນສິ່ງທີ່ພຣະເຈົ້າຊອບພຣະທັຍແມ່ນການພໍໃຈດີທີ່ສຸດໃນຊີວິດ. ການທີ່ພຣະອົງສັ່ງໃຫ້ເຊື່ອຟັງບໍ່ແມ່ນພຣະອົງຢາກໃຫ້ມີຄວາມທໍຣະມານ, ແຕ່ມີຄວາມຍິນດີ ແລະພໍໃຈ. ນີ້ແມ່ນຄວາມຍິນດີທີ່ເກີດຈາກຈຸດປະສົງທີ່ຕັ້ງໃຈໄວ້ຂອງພຣະເຈົ້າ.

ການເຊື່ອສິ່ງຜົນໃຫ້ເກີດຄວາມຮູ້ສຶກຜິດແລະຊອບໃນໃຈ. **ການທີ່ຈະຮັກຊຶ່ງກັນແລະກັນ**ຕ້ອງມີການເສັຽສະລະຕົນເອງ, ເຖິງຈຸດສຸດທ້າຍ **ຄືຍອມຕາຍ**ເພື່ອຄົນອື່ນ.

ພຣະເຢຊູອະທິບາຍວ່າພວກສາວົກເປັນເໝືອນ**ເພື່ອນ**. ນັ້ນເປັນກຽດໃຫຍ່ທີ່ພຣະອົງຊົງຮ້ອງພວກເຮົາວ່າເປັນເພື່ອນຂອງພຣະອົງ. ອົງພຣະເຢຊູໄດ້ບອກພວກສາວົກຈາກໃຈ ແລະ**ບອກ**ພວກສາວົກ**ໃຫ້ຮູ້**ຈັກຄວາມຈິງກ່ຽວກັບອົງ**ພຣະບິດາ.** ການທີ່ເປັນພັນທະມິດນັ້ນຕ້ອງມີຈຸດປະສົງດຽວກັນ. ການເຊື່ອຟັງຄຳສັ່ງຂອງພຣະເຢຊູ ຄືໃຫ້ພວກເຮົາສະແດງອອກມາວ່າພວກເຮົາໄດ້ຍ່າງໄປກັບຈຸດປະສົງຂອງພຣະອົງ, ບໍ່ແມ່ນຕາມຈິດໃຈຂອງເຮົາ.

ການທີ່ມີໝາກມີຜົນຢ່າງນີ້-ຕັ້ງຢູ່ໃນຄວາມຮັກ, ຄວາມຍິນດີ, ຂອງພຣະເຢຊູ-ທີ່ຮ້ອງກັນວ່າຜົນແຫ່ງພຣະວິນຍານ. ນີ້ແມ່ນເຫດຜົນທີ່ອົງພຣະເຢຊູໄດ້ເອີ້ນເອົາພວກສາວົກ ແລະເປັນເຫດຜົນທີ່ພຣະອົງເອີ້ນເອົາພວກເຮົາວັນນີ້ຄືກັນ. ຈຸດປະສົງຂອງພຣະເຈົ້າຄືໃຫ້ເກີດໝາກຜົນໃນຊີວິດເຮົາ. ໃຫ້ຟັງຢູ່ໃນນິສັຍໃຈຄໍແລະຢູ່ໃນສ່ວນເລິກຂອງຫົວໃຈພວກເຮົາ, ຜົນແຫ່ງພຣະວິນຍານນີ້ໄດ້ເກີດຂຶ້ນໂດຍຄວາມຮັກແລະເຊື່ອຟັງຂອງພວກເຮົາຕໍ່ພຣະຄຣິດ.

**ບົດຮຽນຊີວິດ**

ຄົນເຮົາມັກເຂົ້າໃຈຜິດເຖິງເຣື່ອງຄວາມຮັກ ແຕ່ເຣື່ອງນີ້ໄດ້ອະທິບາຍຢ່າງລະອຽດໃນພຣະຄັມພີ, ໂດຍສະເພາະແລ້ວ ເວົ້າເຖິງພຣະເຢຊູ. ຄວາມຮັກບໍ່ແມ່ນມີຄວາມຮູ້ສຶກຕໍ່ພຣະຄຣິດ ແຕ່ແມ່ນການສາຣະພາບຮັກຕໍ່ພຣະອົງ. ຕໍ່ໄປນີ້ແມ່ນການບອກເຖິງຄວາມຮັກຕໍ່ພຣະຄຣິດເປັນຢ່າງໃດໃນຊີວິດປະຈຳວັນ:

- ຮັກຄົນອື່ນເໝືອຢ່າງພຣະເຢຊູໄດ້ເຮັດ: ນີ້ແມ່ນການສະແດງເຖິງການເປັນສາວົກຢ່າງແທ້ຈິງ.
- ເຊື່ອຟັງຄຳສອນຂອງພຣະເຢຊູ: ນີ້ແມ່ນການສະແດງວ່າທ່ານໄດ້ຮັກພຣະອົງ.
- ຈົ່ງເປັນຄົນຈະເຣີນຂຶ້ນໃນດ້ານວິນຍານຕາມເວລາ: ນີ້ແມ່ນການຕອບສນອງຕໍ່ຄຳເອີ້ນຂອງພຣະອົງ.

ສົມມຸດວ່າຄວາມຮັກຂອງທ່ານຕໍ່ພຣະຄຣິດໃນອາທິດທີ່ຜ່ານໄປນີ້ໄດ້ຖືກກວດກາເບິ່ງ. ຫລາຍປານໃດທີ່ທ່ານສາມາດບອກເຖິງລັກຖານວ່າຮັກພຣະອົງ? ມີການກະທຳອັນໃດທີ່ບອກວ່າ ທ່ານໄດ້ຮັກພຣະອົງ?

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.